# ໂຮງຮຽນວັນອາທິດ
## ວັນອາທິດ ທີ 20 ເດືອນມີນາ 2022 (03-20-2022)

---

## ຊີວິດຂອງຄວາມໄວ້ວາງໃຈ

*ມີຫັຍງແດ່ໃນຊີວິດທີ່ທ່ານເຊື່ອໝັ້ນໃຈແທ້ໆ?*

**ຈຸດສຳຄັນໃນບົດຮຽນ:** ພວກເຮົາສາມາດໄວ້ວາງໃຈພຣະເຢຊູໄດ້ເພາະພຣະອົງເປັນທາງນັ້ນ, ເປັນຄວາມຈິງແລະເປັນຊີວິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ເມື່ອສິບປີກ່ອນ, ພັນລະຍາຂອງຂ້າພະເຈົ້າເກືອບຕາຍ. ນາງໄດ້ຖືພາຄັ້ງທຳອິດ, ແລະເດັກນ້ອຍໄດ້ຖືກຕິດຢູ່ໃນບ່ອນທີ່ບໍ່ຖືກຕ້ອງ, ໃນທໍ່ນ້ອຍໆ. ເຊົ້າມື້ນຶ່ງພັນລະຍາຂ້າພະເຈົ້າຕື່ນຂຶ້ນຮ້ອງດ້ວຍສຽງດັງ, ເປັນອຳມະພາດດ້ວຍຄວາມເຈັບປວດຫຼາຍ. ພວກເຮົາບໍ່ຮູ້ຈັກມັນ, ແຕ່ທໍ່ຂະໜາດນ້ອຍນັ້ນໄດ້ແຕກອອກແລະໄດ້ມີເລືອດໄຫຼອອກພາຍໃນ. ພວກເຮົາທັງສອງຢ້ານ. ຂ້າພະເຈົ້າໄດ້ພານາງໄປໂຮງພະຍາບານ, ໃນສະຖານທີ່ມີທ່ານໝໍທີ່ສາມາດຊ່ວຍຊີວິດຂອງນາງໄດ້, ແຕ່ລູກຂອງພວກເຮົາບໍ່ເຄີຍມີໂອກາດ. ມັນເປັນມື້ທີ່ເສັຍຫາຍຢ່າງໜັກທີ່ສຸດ.

ເປັນເວລາຫຼາຍເດືອນຕໍ່ມາ, ພໍ່ຂອງຂ້າພະເຈົ້າບໍ່ສາມາດເຫັນງຕິງໄດ້, ແລະພວກເຮົາທັງສອງກໍ່ຄິດບໍ່ອອກ. ພວກເຮົາສົງສັຍວ່າ, ພຣະເຈົ້າເຮັດຫັຍງຢູ່? ພວກເຮົາຈະໄປທາງໃດ? ພຣະອົງສາມາດຊ່ວຍພວກເຮົາໄດ້ຢ່າງແທ້ຈິງບໍ່?

ນັ້ນບໍ່ແມ່ນເຫດການດຽວທີ່ຄອບຄົວຂອງຂ້າພະເຈົ້າໄດ້ພະຍາຍາມທີ່ຈະໄວ້ວາງໃຈໃນພຣະເຈົ້າ. ທ່ານອາດຈະມີປະສົບການຢ່າງນັ້ນເໝືອນກັນ- ເວລາທີ່ທ່ານເບິ່ງຄືວ່າມີພຽງແຕ່ຄຳຖາມ. ຂອບພຣະຄຸນທີ່ການທຳຣາຊກິດຂອງພຣະເຢຊູມີອຳນາດຫຼາຍກ່ວາຄຳຖາມແລະຄວາມສົງສັຍຂອງພວກເຮົາ. ພຣະເຢຊູໄດ້ສຳແດງໃຫ້ເຫັນສຳລັບພວກເຮົາ. ພວກເຮົາສາມາດໄວ້ວາງໃຈໄດ້ວ່າພຣະອົງຢູ່ກັບພວກເຮົາ. ນຳພາເຮົາໄປຫາພຣະບິດາ, ບໍ່ວ່າພວກເຮົາຈະປະເຊີນກັບສິ່ງໃດ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

<u>**ສຶກສາພຣະຄັມພີ**</u>

### 1. ໂຢຮັນ 13:36-14:1

*36. ຝ່າຍຊີໂມນເປໂຕໄດ້ທູນພຣະອົງວ່າ, "ນາຍເຈົ້າເອີຍ, ທ່ານຈະໄປໃສ" ພຣະເຢຊູຊົງຕອບວ່າ, "ບ່ອນທີ່ເຮົາຈະໄປນັ້ນທ່ານ ຈະຕາມເຮົາໄປດຽວນີ້ບໍ່ໄດ້ ແຕ່ພາຍຫລັງທ່ານຈະຕາມໄປ." 37. ເປໂຕທູນພຣະອົງວ່າ, "ນາຍເຈົ້າເອີຍ, ເປັນຫຍັງຂ້ານ້ອຍຈຶ່ງຕາມທ່ານໄປດຽວນີ້ບໍ່ໄດ້ ຂ້ານ້ອຍຈະສຣະຊີວິດເພື່ອທ່ານ." 38. ພຣະເຢຊູຊົງຕອບວ່າ, "ທ່ານຈະສຣະຊີວິດຂອງທ່ານເພື່ອເຮົາຫລື ເຮົາບອກທ່ານຕາມຄວາມຈິງວ່າ ກ່ອນໄກ່ຈະຂັນທ່ານຈະປະຕິເສດເຮົາເຖິງສາມເທື່ອ." 1. "ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປ ຈົ່ງໄວ້ວາງໃຈໃນພຣະເຈົ້າແລະໄວ້ວາງໃຈໃນເຮົາເໝືອນກັນ.*

ໃນພວກເຮົາຫຼາຍໆຄົນສາມາດເປັນເໝືອນກັບເປໂຕ; ເປໂຕເປັນເໝືອນກັບພວກເຮົາ. ພຣະເຢຊູຫາກໍ່ບອກບັນຍັດໃໝ່ທີ່ເລິກຊຶ້ງກ່ຽວກັບການຮັກເຊິ່ງກັນແລະກັນ (ໂຢຮັນ 13:34), ແຕ່ເປໂຕບໍ່ສົນໃຈສິ່ງທີ່ພຣະເຢຊູກ່າວໄວ້ກ່ອນໜ້ານີ້ຫຼາຍກ່ວາ. ພຣະເຢຊູຈະໄປໃສ, ເຊິ່ງເຮັດໃຫ້ພຣະເຢຊູບອກກ່ຽວກັບແຜ່ນດິນສວັນຂອງພຣະບິດາຂອງພຣະອົງ, ເປໂຕສົນໃຈໃນສິ່ງທີ່

ລາວຢາກຮູ້ກ່ຽວກັບພຣະເຈົ້າຫຼາຍກ່ວາສິ່ງທີ່ພຣະເຢຊູຕ້ອງການໃຫ້ລາວເຮັດໃຫ້ສຳລັບພຣະເຈົ້າ. ສິ່ງນັ້ນມັນອາດຄຸ້ນເຄີຍກັບພວກເຮົາ.

ພວກເຮົາຍັງເຫັນເປໂຕໃນອີກທ່າທີນຶ່ງທີ່ຄ້າຍຄືກັບພວກເຮົາ. ເປໂຕຖາມຢ່າງກະທັນຫັນວ່າ, "ເປັນຫັຍງຂ້ານ້ອຍຈຶ່ງຕິດຕາມພຣະອົງໄປບໍ່ໄດ້ໃນເວລານີ້? ຂ້ານ້ອຍຈະເສັຽສຣະຊີວິດຂອງຂ້ານ້ອຍເພື່ອພຣະອົງ." ເປໂຕມີຄວາມເຊື່ອໝັ້ນໃຈໃນຄວາມເຊື່ອໝັ້ນຂອງຕົນເອງ- ແຕ່ເປໂຕຄິດຜິດ. ພວກເຮົາກໍເຊັ່ນດຽວກັນ, ມັກຈະຄິດວ່າຕົນເອງເປັນບຸກຄົນສຳຄັນແລະມີຄວາມເຂັ້ມແຂງຫຼາຍກ່ວາທີ່ພວກເຮົາຄວນຈະເປັນ. ພຣະເຢຊູໄດ້ເຮັດໃຫ້ຄວາມເຊື່ອໝັ້ນຕົນເອງຂອງເປໂຕສັ່ນສະເທືອນ"(ຂໍ້ 38). ໂຫດຮ້າຍ. ເປໂຕເຊື່ອດ້ວຍຄວາມບໍຣິສຸດໃຈວ່າຈະສູ້ຈົນຕົວຕາຍຖ້າຫາກມີຄົນພະຍາຍາມທີ່ຈະເອົາພຣະເຢຊູໄປຈາກລາວ, ແຕ່ພຣະເຢຊູຊົງຊາບວ່າເມື່ອຄວາມກົດດັນມາເຖິງ, ເປໂຕຈະປະຕິເສດເຖິງແມ່ນວ່າຮູ້ຈັກກັບພຣະອົງ. ເປໂຕເຊື່ອວ່າລາວເອງເຂັ້ມແຂງພໍສົມຄວນແລະອຸທິດຕົນເຕັມທີ່ພໍທີ່ຈະຍຶດໝັ້ນໃນຄວາມເຊື່ອໃນພຣະເຢຊູ, ບໍ່ວ່າຈະມີຫັຽງເກີດຂຶ້ນ. "ຂ້ານ້ອຍຈະສຣະຊີວິດເພື່ອພຣະອົງ." ພຣະເຢຊູໄດ້ກ່າວຖ້າເປັນດັ່ງນັ້ນ- ແລະພຣະເຢຊູກ່າວຖືກຕ້ອງ. ເມື່ອເຖິງເວລາທີ່ຈະຢືນຂຶ້ນເພື່ອພຣະເຢຊູຈິງໆ, ເປໂຕກໍພາດໄປ. ລາວປະຕິເສດ, ປະຕິເສດ, ປະຕິເສດ, ແລະໃນເວລາທີ່ໄກ່ຂັນ, ລາວໜຶກຂຶ້ນໄດ້ວ່າເຫດການນີ້ຈະເກີດຂຶ້ນ. "ແລະລາວໄດ້ແລ່ນອອກໄປຂ້າງນອກແລະຮ້ອງໄຫ້ຢ່າງຂົມຂື່ນ" (ມັດທາຍ 26:75). ມີໃຜທີ່ຍັງບໍ່ເປັນຢ່າງນັ້ນ? ໃນບາງຢ່າງ, ຂ້າພະເຈົ້າແນ່ໃຈວ່າພວກເຮົາທຸກຄົນເຊື່ອວ່າພວກເຮົາແຂງແຮງພໍ, ດີພໍ, ກ້າຫານພຽງພໍ, ຫຼືສະຫຼາດພໍ- ພຽງແຕ່ພົບວ່າຕົວເອງຈົມເລິກຢູ່ພາຍໃຕ້ຄວາມບາບຫຼືຄວາມຢ້ານກົວຂອງພວກເຮົາເມື່ອພວກເຮົາຖືກທ້າທາຍ. ຄວາມສາມາດແລະຄວາມພະຍາຍາມຂອງພວກເຮົາບໍ່ພຽງພໍ. ຄືກັບເປໂຕ, ພວກເຮົາຕ້ອງຮຽນຮູ້ຄືກັບເປໂຕວ່າເຮົາບໍ່ສາມາດໄວ້ວາງໃຈໃນຕົວເອງໄດ້ແຕ່ພວກເຮົາສາມາດໄວ້ວາງໃຈໃນພຣະເຢຊູໄດ້. ແຜນການຂອງເປໂຕຄືວ່າລາວຈະຕາຍແທນພຣະເຢຊູ. ແຕ່ ພຣະເຢຊູມີແຜນການກົງກັນຂ້າມ. ຂໍ້ 36 ຊີ້ໃຫ້ເຫັນຄວາມຄິດທີ່ວ່າຄວາມເຊື່ອຂອງເປໂຕບໍ່ເຂັ້ມແຂງພຽງພໍທີ່ຈະຕິດຕາມພຣະເຢຊູໄປເຖິງຄວາມຕາຍໃນເວລານັ້ນ, ເຖິງແມ່ນວ່າລາວຈະເຮັດຢ່າງນັ້ນໃນພາຍຫຼັງ. ດ້ວຍເຫດໃດ? ຍ້ອນວ່າອີກບໍ່ດົນພຣະເຢຊູຈະເອົາບາບຂອງເປໂຕໃສ່ໄວ້ທີ່ພຣະອົງເອງ, ຕາຍໃນຊື່ຂອງເປໂຕທີ່ເທິງໄມ້ກາງແຂນແລະປຸກເປໂຕໃຫ້ຟື້ນຄືນມີຊີວິດໃໝ່ໂດຍຜ່ານການຟື້ນຄືນຂຶ້ນມາຈາກຕາຍຂອງພຣະເຢຊູ. ພຣະເຢຊູເຂັ້ມແຂງພໍທີ່ຈະເອົາຊະນະຄວາມຕາຍໃຫ້ກັບເປໂຕແລະຄົນອື່ນໆ. ພຣະເຢຊູເຮັດໃຫ້ເປໂຕຕິດຕາມພຣະອົງໄປສວັນໄດ້ໃນພາຍຫຼັງ.

ດັ່ງນັ້ນ, ເປໂຕຄວນເຮັດຢ່າງໃດໃນເວລານັ້ນ? ເຊື່ອວາງໃຈໃນພຣະເຢຊູ. ອົງພຣະຜູ້ເປັນເຈົ້າບໍ່ພຽງແຕ່ໄດ້ໃຫ້ຄຳເຕືອນລ່ວງໜ້າຕໍ່ເປໂຕ, ແຕ່ພຣະເຢຊູຍັງໄດ້ເອີ້ນໃຫ້ອັຄສາວົກທຸກຄົນໃຫ້ໄວ້ວາງໃຈ. ເຖິງເປໂຕຈະໝັ້ນໃຈໃນຕົວເອງ, ແຕ່ພຣະເຢຊູກ່າວວ່າ, "ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປ ຈົ່ງໄວ້ວາງໃຈໃນພຣະເຈົ້າແລະໄວ້ວາງໃຈໃນເຮົາເໝືອນກັນ." ເຮົາຕ້ອງຮຽນຮູ້, ດັ່ງທີ່ເປໂຕໄດ້ເຮັດ, ວ່າຄວາມໝັ້ນໃຈທີ່ເຮົາມີບໍ່ແມ່ນຢູ່ໃນຕົວເຮົາເອງ. ແຕ່ຢູ່ໃນຜູ້ທີ່ເຮົາໄວ້ວາງໃຈ, ຈິດໃຈຂອງພວກເຮົາບໍ່ຈຳເປັນຕ້ອງມີບັນຫາ; ເຖິງແມ່ນວ່າໃນເວລາທີ່ພວກເຮົາບໍ່ເຂົ້າໃຈ, ພວກເຮົາໄວ້ວາງໃຈໃນພຣະເຈົ້າໄດ້.

## 2. ໂຢຮັນ 14:2-3

***2.*** *ໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີ ເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍ. 3. ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເໝືອນກັນ.*

ພວກສາວົກມີເຫດຜົນທີ່ຈະບໍ່ໃຫ້ຈິດໃຈຂອງພວກເຂົາກະວົນກະວາຍ. ການເຊື່ອວາງໃຈໃນພຣະເຈົ້າສາມາດເປັນເຫດຜົນທີ່ພຽງພໍ. ແລະນອກຈາກນີ້ແລ້ວຍັງຖືກເອີ້ນໃຫ້ເຊື່ອວາງໃຈໃນພຣະເຢຊູເພີ້ມຂຶ້ນອີກ. ພຣະເຈົ້າພຣະບຸດສະຖິດຢູ່ທີ່ນັ້ນ, ພວກ

ເຂົາຢູ່ນຳກັນກັບພຣະອົງໃນເວລານີ້! ແຕ່ອີກບໍ່ດົນພຣະເຢຊູຈະຈາກໄປ. ແຕ່ໃນຂນະນີ້ພຣະອົງຈັດຕຽມສາວົກຂອງພຣະອົງສຳລັບການຈາກໄປຂອງພຣະອົງ, ພຣະອົງໄດ້ໃຫ້ອີກເຫດຜົນນຶ່ງເພື່ອຈະບໍ່ໃຫ້ພວກເຂົາເກີດຄວາມກະວົນກະວາຍໃຈ. ພຣະອົງໄດ້ໃຫ້ສັນຍາກັບຜູ້ທີ່ເຊື່ອຍັງມີທີ່ຢູ່ຖາວອນເປັນນິດໃນ "ເຮືອນຂອງພຣະບິດາຂອງເຮົາ." ພຣະອົງໄດ້ກ່າວວ່າໃນເຮືອນຂອງພຣະບິດາຂອງພຣະອົງມີຢູ່ "ຫຼາຍຫ້ອງ." ຄຳເວົ້າທີ່ແປວ່າ "ຫ້ອງ" ບາງຄັ້ງໄດ້ແປຄວາມໝາຍວ່າ "ເຮືອນ" ເຊິ່ງມັກຈະໃຫ້ພວກເຮົາໄດ້ຄິດເຖິງເຮືອນທີ່ມີຂະໜາດໃຫ່ງໂດຍເນັ້ນໃສ່ຄວາມອູດົມສົມບູນແລະຮັ່ງມີ. ນີ້ເປັນຄວາມໝາຍທີ່ແທ້ຈິງຂອງພຣະເຢຊູ.

ທີ່ເນັ້ນໜັກເຖິງສະຖານທີ່ສະຖິດຂອງພຣະບິດາ- ແລະສະຖານທີ່ນັ້ນຢູ່ໃນທີ່ປະທັບຂອງພຣະເຈົ້າ. ພຣະເຈົ້າມີທີ່ຢູ່ຖາວອນສຳລັບຜູ້ເຊື່ອໃນພຣະອົງ. ຄວາມຍິ່ງໃຫ່ຽຂອງສວັນແມ່ນເປັນທີ່ປະທັບຢູ່ຂອງພຣະເຈົ້າ! ຢ່າຕັ້ງໃຈຍອມຮັບ "ເຮືອນ" ຂອງທ່ານ, ຄືກັບຄະລືຫາດທີ່ມີສະງ່າຣາສີທີ່ຈະເຮັດໃຫ້ຟ້າສວັນເປັນພິເສດ. ພຣະເຢຊູກຳລັງກະກຽມສະຖານທີ່ສຳລັບພວກເຮົາທີ່ຈະຢູ່ກັບພຣະອົງ, ເພື່ອຈະຢູ່ໃນທີ່ປະທັບຂອງພຣະອົງຕລອດໄປເປັນນິດ- ແລະນັ້ນແມ່ນຜົນປໂຍດສູງສຸດຂອງສວັນ.

ພຣະເຢຊູໄດ້ເນັ້ນໜັກເຖິງຄວາມສຳຄັນນີ້ໃນເວລາທີ່ພຣະອົງຊົງສັນຍາວ່າ, "ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ"(ຂໍ້ 3). ພຣະເຢຊູໄດ້ສັນຍາວ່າຈະກັບຄືນມາຫາພວກທີ່ຕິດຕາມພຣະອົງ, ຊົງສະຖິດຢູ່ກັບເຂົານອກເໜືອໄປກວ່າຄວາມຕາຍອີກ, ແລະນຳເຂົາເຂົ້າໄປທີ່ຊົງປະທັບຢູ່ຂອງພຣະອົງທີ່ເປັນລາງວັນຊີວິດນິຣັນດອນຂອງເຂົາ. ບໍ່ວ່າເຮືອນຈະສະງ່າງາມ- ບໍ່ວ່າງາມປານໃດ- ອາດຈະດີກ່ວາການທີ່ຢູ່ໃນທີ່ປະທັບຢູ່ຂອງພຣະເຈົ້າບໍ່ໄດ້.

ພຣະເຢຊູໄດ້ຊີ້ໄປເຖິງເຫດການທີ່ກຳລັງຈະເກີດຂຶ້ນກັບການຈາກໄປຂອງພຣະອົງ- ແລະຈຸດປະສົງຂອງມັນ. ພຣະອົງກ່າວວ່າ, "ເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານ." ແຕ່ໃນຂໍ້ຄວາມຕໍ່ໄປນີ້ພຣະອົງໄດ້ຮັບປະກັນຕໍ່ເຂົາວ່າ, "ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ." ປໂຍກສັ້ນໆເຫຼົ່ານີ້ສລຸບໄດ້ຄວາມໝາຍວ່າຄວາມຕາຍຂອງພຣະອົງໄດ້ໃກ້ເຂົ້າມາເຖິງແລ້ວ, ການຟື້ນຄືນຊີວິດ, ການສະເດັດຂຶ້ນ, ແລະການກັບມາ- ເປັນເຫດການທີ່ຈຳເປັນໃນການເຮັດໃຫ້ຟ້າສວັນກາຍເປັນຄວາມຈິງສຳລັບພວກເຮົາ. ພຣະເຢຊູຈະເຮັດໃຫ້ເປັນໄປໄດ້ສຳລັບປະຊາກອນຂອງພຣະອົງທີ່ຢູ່ກັບພຣະເຈົ້າພຣະບິດາ. ແລະນັ້ນແມ່ນພຣະຣາຊກິດຂອງພຣະອົງຕັ້ງແຕ່ເລີ້ມຕົ້ນ. ນັບຕັ້ງແຕ່ພວກເຮົາໄດ້ສ້າງຄວາມສຳພັນກັບພຣະເຈົ້າຢ່າງມີສັນຕິສຸກຕລອດໄປ, ການຢືນຢັນຂອງພຣະເຢຊູວ່າພຣະອົງສາມາດເປັນຕົ້ນເຫດທີ່ນຳຄົນທັງຫຼາຍມາຫາພຣະເຈົ້າ ນັ້ນເປັນຂ່າວທີ່ດີທີ່ສູດ.

## 3. ໂຢຮັນ 14:4-6

*4. ແລະທ່ານຮູ້ຈັກທາງທີ່ເຮົາຈະໄປນັ້ນ." 5. ໂທມາທູນພຣະອົງວ່າ, "ນາຍເຈົ້າເອີຍ, ພວກຂ້ານ້ອຍບໍ່ຮູ້ວ່າທ່ານຈະໄປໃສ ພວກຂ້ານ້ອຍຈະຮູ້ຈັກທາງນັ້ນດ້ວຍຢ່າງໃດ." 6. ພຣະເຢຊູຊົງຕອບລາວວ່າ, "ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ.*

ໂຢຮັນ 14:6 ເປັນຂໍ້ນຶ່ງທີ່ມີຫຼາຍຄົນຮູ້ຈັກດີໃນພຣະຄັມພີ ແຕ່ກໍເປັນຂໍ້ນຶ່ງທີ່ເຮັດໃຫ້ເກີດມີຄວາມຂັດແຍ່ງກັນຫຼາຍ. ເມື່ອໂທມາຖາມວ່າພວກຂ້ານ້ອຍຈະຮູ້ທາງນັ້ນໄດ້ດ້ວຍຢ່າງໃດ, "ພຣະເຢຊູຕອບລາວວ່າ, ເຮົານີ້ແຫຼະເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ, ບໍ່ມີໃຜມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ." ໝາຍຄວາມວ່າບໍ່ມີໃຜສາມາດໄປເຖິງພຣະບິດາໄດ້ຍົກເວັ້ນຈະຜ່ານມາທາງພຣະເຢຊູ. ບໍ່ມີຜູ້ໃດສາມາດພົບພໍ້ຄວາມອິ່ມເອີບທາງໃຈຢ່າງເຕັມທີ່ຍົກເວັ້ນໂດຍຜ່ານທາງພຣະເຢຊູ, ບໍ່ມີຜູ້ໃດສາມາດພົບຄວາມຫັວງອັນສູງສຸດຍົກເວັ້ນໂດຍຜ່ານທາງພຣະເຢຊູ, ແລະບໍ່ມີໃຜຊອກຫາທາງທີ່ໄປສູ່ສວັນໄດ້ຍົກເວັ້ນມາທາງພຣະເຢຊູເທົ່ານັ້ນ.

ແຕ່ໜ້າເສັ່ງດາຍ, ບໍ່ແມ່ນໝົດທຸກຄົນທີ່ຈະຍອມຮັບຄວາມຈິງໃນຂໍ້ນີ້. ຂ້າພະເຈົ້າມີໝູ່ເພື່ອນແລະສະມາຊິກໃນຄອບຄົວ-ແລະທ່ານເອງອາດຈະມີ-ຜູ້ທີ່ເຊື່ອວ່າມີຫຼາຍວິທີທາງທີ່ຈະມາຫາພຣະເຈົ້າ. ພຣະເຢຊູບອກໄວ້ວ່າພວກເຮົາມີທາງດຽວເທົ່ານັ້ນທີ່ຈະໃຫ້ຄວາມວ່າງເປົ່າໃນຈິດໃຈຂອງພວກເຮົາໄດ້ຮັບຄວາມເຕັມເຕັມ. ແລະພວກເຮົາມີຄວາມຫວັງພຽງຢ່າງດຽວສຳລັບຊີວິດໃນຊີວິດນີ້. ຄວາມຈິງອັນດຽວເທົ່ານັ້ນທີ່ເຮັດໃຫ້ຄົນເຮົາເຂົ້າຫາພຣະເຈົ້າທີ່ພວກເຮົາຖືກສ້າງຂຶ້ນເພື່ອຄວາມຊົມຊື່ນຍິນດີ.

ນີ້ຄືຄວາມຈິງອີກອັນນຶ່ງທີ່ເຮັດໃຫ້ພວກເຮົາເກີດໜັກໃຈເມື່ອພວກເຮົາຄຶດເຖິງບຸກຄົນຜູ້ທີ່ເຮົາຮັກທີ່ຍັງບໍ່ມີສາຍສຳພັນກັບພຣະເຈົ້າໂດຍທາງພຣະເຢຊູ, ແຕ່ມັນເປັນການປອບໂຍນເມື່ອຄວາມຈິງນັ້ນມັນມຸ່ງໄປສູ່ຕົວເຮົາເອງ, ພຣະເຢຊູໄດ້ບອກເຫດການນີ້ກັບເຫຼົ່າອັຄສາວົກຂອງພຣະອົງເພື່ອໃຫ້ກຳລັງໃຈພວກເຂົາ. ເພື່ອພວກເຂົາ, ຂນະທີ່ມັນເປັນຂອງພວກເຮົາທີ່ຢູ່ໃນພຣະຄຣິດ, ນີ້ແມ່ນຄຳສັນຍາວ່າພວກເຮົາມີສິ່ງທີ່ພວກເຮົາຕ້ອງການທີ່ສຸດແລະຈຳເປັນຫຼາຍທີ່ສຸດ. “ຖ້າທ່ານທັງຫຼາຍຮູ້ຈັກເຮົາແລ້ວພວກທ່ານກໍຄົງຮູ້ຈັກພຣະບິດາຂອງເຮົາເໝືອນກັນ.” ຂໍ້ 7). ບໍ່ມີຂ່າວດີອັນໃດລື່ນກ່ວານີ້ສຳລັບຈິດໃຈ.

ເມື່ອພວກເຮົາຕິດພັນຢູ່ກັບພຣະເຢຊູ, ພວກເຮົາຈະກັບບ້ານ-ມຸ້ງໜ້າໄປສູ່ຊີວິດນິລັນດອນກັບພຣະຄຣິດ. ໃນອີກແງ່ນຶ່ງ, ພວກເຮົາມີຊີວິດນິລັນດອນນັ້ນຢູ່ແລ້ວ. ຊີວິດນິລັນດອນກັບພຣະຄຣິດບໍ່ມີແຕ່ສງວນໄວ້ສຳລັບຊີວິດໃນອານາຄົດ. ພວກເຮົາມີໃນປະຈຸບັນທັນທີທີ່ພວກເຮົາເຊື່ອວາງໃຈໃນພຣະເຢຊູ! ເໝືອນດັ່ງທີ່ພຣະເຢຊູກ່າວໄວ້ໃນຕອນທ້າຍສຸດຂອງພຣະທັມມັດທາຍວ່າ “ເຮົາຢູ່ກັບທ່ານທັງຫຼາຍທຸກໆວັນຈົນໝົດກັບ.” (ມັດທາຍ 28: 20) ພຣະເຢຊູເປັນທາງດຽວທີ່ໄປເຖິງພຣະເຈົ້າພຣະບິດາ. ຄວາມຈິງທີ່ວ່າພຣະອົງຄືທາງດຽວຄວນຈະກະຕຸ້ນຈິດໃຈເຮົາຢາກແບ່ງປັນຄວາມຈິງແລະຄວາມຮັກຂອງພຣະຄຣິດກັບຄົນອື່ນ. ຄວາມຈິງທີ່ວ່າພຣະເຢຊູເປັນວິທີທາງດຽວທີ່ນຳທາງໄປສູ່ພຣະບິດາຄວນຈະເປັນເຫດໃຫ້ພວກເຮົາສເລີມສລອງໄດ້.

## ການນຳໃຊ້ໃນຊີວິດ

ພວກເຮົາສາມາດໄວ້ວາງໃຈພຣະເຢຊູໄດ້ເພາະວ່າພຣະອົງເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ. ເລືອກນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້.

❖ **ຈົ່ງພິຈາຣະນາ.** ຄຶດເຖິງພື້ນທີ່ຂອງຊີວິດຂອງທ່ານທີ່ທ່ານມີແນວໂນ້ມເຊື່ອໝັ້ນໃນຄວາມສາມາດຂອງທ່ານເອງ. ທ່ານຈະເພິ່ງພຣະເຢຊູໃຫ້ຫຼາຍຂຶ້ນຫຼືໜ້ອຍລົງໃນພື້ນທີ່ແນວນັ້ນໄດ້ແນວໃດ?

❖ **ຈົ່ງຈົດລາຍການ.** ຈົດເປັນບັນຊີລາຍຊື່ 5-10 ຄັ້ງທີ່ທ່ານໄດ້ປະສົບກັບຄວາມຈິງຂອງພຣະເຢຊູ. ວາງລາຍຊື່ນັ້ນໄວ້ບ່ອນໃດບ່ອນນຶ່ງທີ່ທ່ານສາມາດຊອກຫາໄດ້ແລະໄດ້ຮັບການສນັບສນູນຈາກມັນໃນມື້ນຶ່ງໃນອະນາຄົດເມື່ອຈິດໃຈຂອງທ່ານມີບັນຫາ.

❖ **ເຊື່ອມຕໍ່.** ພົບປະກັບໝູ່ເພື່ອນຫຼືສະມາຊິກໃນຄອບຄົວທີ່ບໍ່ຮູ້ຈັກພຣະເຢຊູແລະແບ່ງປັນຄວາມເຊື່ອທາງວິນຍານຂອງທ່ານໃຫ້ເຊິ່ງກັນແລະກັນ. ຈົ່ງອະທິຖານກ່ອນວ່າທ່ານຈະມີຄວາມສງ່າງາມແລະຄວາມຈິງແລະທ່ານຈະເຊື່ອໃນຜົນຂອງການສົນທະນາກັບພຣະເຈົ້າ.

ພວກເຮົາທຸກຄົນເຄີຍມີໃນຊີວິດຂອງພວກເຮົາ ເມື່ອການໄວ້ວາງໃຈໃນພຣະເຈົ້າເປັນເຣື່ອງທີ່ຍາກແທ້ໆ. ແຕ່ດັ່ງທີ່ພວກເຮົາໄດ້ຮັບການເຕືອນໃນບົດຮຽນນີ້, ພຣະເຢຊູແມ່ນຄວາມຈິງສເມີ. ຂໍຂອບພຣະຄຸນພຣະອົງສຳລັບຄວາມຫັວງທີ່ພວກເຮົາມີໃນປະຈຸບັນແລະຕລອດໄປເນື່ອງຈາກສິ່ງທີ່ພຣະອົງໄດ້ກະທຳ.

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ https://ulsb.org/sunday-school-2/ ແປໂດຍ VR.